# ການລິເລີ່ມດ້ານສຸຂະພາບກາໂຕລິກ
# ນະໂຍບາຍຄວາມຊ່ວຍເຫຼືອດ້ານການເງິນ

ທີ່ CHI, ການສ້າງຊຸມຊົນທີ່ມີສຸຂະພາບແຂງແຮງຂຶ້ນ ແລະ ການຊ່ວຍເຫຼືອຄົນທີ່ທຸກຍາກ ແລະ ດ້ອຍໂອກາດແມ່ນໜ້າທີ່ ແລະ ຄວາມປາຖະໜາຂອງພວກເຮົາ.
ທາງໜຶ່ງທີ່ພວກເຮົາເຮັດແມ່ນຜ່ານໂຄງການຊ່ວຍເຫຼືອດ້ານການເງິນ CHI ຂອງພວກເຮົາ ເຊິ່ງ ພວກເຮົາຈະຫຼຸດຜ່ອນຄ່າໃຊ້ຈ່າຍປິ່ນປົວຂອງຄົນເຈັບ ໂດຍອີງໃສ່ຄວາມຈຳເປັນດ້ານການເງິນຂອງພວກເຂົາ.

## ວິທີທີ່ພວກເຮົາສາມາດຊ່ວຍ

ພວກເຮົາໃຫ້ບໍລິການປິ່ນປົວໂດຍບໍ່ເສຍຄ່າສຳລັບພາວະສຸກເສີນ, ຫຼື ການບໍລິການອື່ນໆທີ່ຈຳເປັນທາງການແພດ, ການບໍລິການຂອງ ພວກເຮົາສຳລັບຄົນເຈັບທີ່:

- ລາຍຮັບຂອງຄອບຄົວປະຈຳປີທີ່ໜ້ອຍກວ່າ ຫຼື ເທົ່າກັບ 300% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ ຕາມທີ່ໄດ້ກຳນົດຢູ່ໃນຄຳແນະນຳທີ່ໄດ້ເຜີຍແຜ່ປະຈຳປີໂດຍ ກະຊວງສາທາລະນະສຸກຂອງສະຫະລັດ (FPL);

- ໄດ້ຮ່ວມມືດ້ວຍຄວາມພະຍາຍາມທີ່ຈະລະບາຍທາງເລືອກໃນການຊຳລະເງິນອື່ນໆທັງໝົດ ແລະ

- ຕື່ມແບບຟອມຄຳຮ້ອງສະໝັກຂອງໂຄງການ, ແລະ ໄດ້ສະໜອງເອກະສານປະກອບ ເພື່ອຢືນຢັນລາຍຮັບ.

ໝາຍເຫດ: ໃນບາງກໍລະນີ, ຄົນເຈັບອາດຈະໄດ້ຮັບຄວາມຊ່ວຍເຫຼືອດ້ານການເງິນໂດຍ ບໍ່ມີຄຳຮ້ອງສະໝັກຢ່າງເປັນທາງການ.
ລາຍລະອຽດແມ່ນມີຢູ່ໃນນະໂຍບາຍຄວາມຊ່ວຍເຫຼືອດ້ານການເງິນ.

## ຄ່າທຳນຽມທີ່ຮຽກເກັບຈາກຄົນເຈັບທີ່ມີສິດໄດ້ຮັບຄວາມຊ່ວຍເຫຼືອດ້ານການເງິນ

ຄົນເຈັບທີ່ມີສິດໄດ້ຮັບຄວາມຊ່ວຍເຫຼືອດ້ານການເງິນຈະບໍ່ຕ້ອງເສຍຄ່າໃຊ້ຈ່າຍໃນກໍລະນີສຸກເສີນ ຫຼື ການປິ່ນປົວທີ່ຈຳເປັນທາງການແພດອື່ນໆ ຫຼາຍກວ່າຈຳນວນທີ່ຮຽກເກັບໂດຍທົ່ວໄປ ສຳລັບບຸກຄົນທີ່ມີປະກັນໄພຄຸ້ມຄອງການປິ່ນປົວດັ່ງກ່າວ.

## ພ້ອມທີ່ຈະດຳເນີນຂັ້ນຕອນຕໍ່ໄປຫຼືຍັງ?

ຕື່ມຄຳຮ້ອງສະໝັກ ແລະ ສົ່ງເຖິງ [ໃສ່ທີ່ຢູ່ຫ້ອງການ ຫຼື ບຸກຄົນ.]

ນະໂຍບາຍຄວາມຊ່ວຍເຫຼືອດ້ານການເງິນ, ຄຳຮ້ອງສະໝັກ ແລະ ບົດສັງລວມນີ້ມີຢູ່ໃນ (ໃສ່ລິ້ງຄ໌ເພື່ອເຂົ້າໃສ່ເວັບໄຊທ໌), ເປັນ ພາສາອັງກິດ ແລະ ພາສາແອັສປາຍ. ຮັບສຳເນົາເອກະສານເຫຼົ່ານີ້ໂດຍບໍ່ເສຍຄ່າ

ທາງໄປສະນີ ຫຼື ດ້ວຍຕົນເອງ, ເພື່ອຮັບຄວາມ
ຊ່ວຍເຫຼືອໃນການຕື່ມຄໍາຮ້ອງສະໝັກ, ຫຼື
ເພື່ອຂໍສໍາເນົາເອກະສານເຫຼົ່ານີ້ເປັນພາສາອື່ນທີ່ບໍ່ໄດ້ລະບຸ,
ກະລຸນາຕິດຕໍ່ຫາ:

ການລິເລີ່ມດ້ານສຸຂະພາບກາໂຕລິກ

*ຊື່ໂຮງໝໍ*

*ຫ້ອງການໂຮງໝໍ ຫຼື ພະແນກທີ່ສາມາດໃຫ້ຄວາມຊ່ວຍເຫຼືອໄດ້*

*ທີ່ຢູ່*

*ໂທລະສັບ #*

ບາງຄັ້ງເອກະສານເຫຼົ່ານີ້ກໍ່ຈະມີຢູ່ໃນຫ້ອງສຸກເສີນ ແລະ
ມີຢູ່ຕາມບໍລິເວນທີ່ເຂົ້າຮັບການຮັກສາໃນໂຮງໝໍ.